ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 12 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 10 JUN 2021

# ຂໍ້ຕົກລົງ
# ວ່າດ້ວຍການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 146/ສຄຄຊ, ລົງວັນທີ 27 ພຶດສະພາ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ເພື່ອອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃຫ້ແກ່ການບໍລິການຈັດລຳດັບ ຄວາມໜ້າເຊື່ອຖືໃຫ້ແກ່ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ ແນໃສ່ຮັບປະກັນໃຫ້ແກ່ການ ເຄື່ອນໄຫວການບໍລິການດັ່ງກ່າວໃຫ້ມີຄວາມ ເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 (ໃໝ່) ການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື**

ການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ແມ່ນການອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເພື່ອໃຫ້ບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກ ພາຍໃນ ຫຼື ຕ່າງປະເທດ ສາມາດໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ ຕາມຂອບເຂດການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື** ໝາຍເຖິງ ບໍລິສັດທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມ ກົດໝາຍ ແລະ ລະບຽບທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ ທີ່ໄດ້ຮັບການຮັບຮອງຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ເພື່ອໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖືໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ;

2. **ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ** ໝາຍເຖິງ ບໍລິສັດທີ່ມີຈຸດປະສົງອອກຈໍາໜ່າຍຮຸ້ນ ແລະ ຮຸ້ນກູ້, ບໍລິສັດອອກຈໍາໜ່າຍຮຸ້ນ, ບໍລິສັດອອກຈໍາໜ່າຍຮຸ້ນກູ້, ບໍລິສັດຈົດທະບຽນ, ຕະຫຼາດຫຼັກຊັບ, ກອງທຶນເພື່ອການລົງທຶນ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ກຸ່ມເປົ້າໝາຍອື່ນ ຕາມການກໍານົດຂອງ ຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ໃຊ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖືຂອງ ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖືຈາກ ພາຍໃນ ຫຼື ຕ່າງປະເທດຢູ່ ສປປ ລາວ.

**ມາດຕາ 4 (ປັບປຸງ) ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ນໍາໃຊ້ສໍາລັບ ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖື ກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ.

## ໝວດທີ 2
## ການຂໍຮັບຮອງເປັນບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື

**ມາດຕາ 5 (ປັບປຸງ) ການຂໍຮັບຮອງເປັນບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື**

ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ທີ່ມີຈຸດປະສົງຂໍການຮັບຮອງເພື່ອໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖືໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕ້ອງມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 6 ແລະ ປະກອບເອກະສານຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ພິຈາລະນາ.

**ມາດຕາ 6 (ປັບປຸງ) ເງື່ອນໄຂການຂໍຮັບຮອງເປັນບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື**

ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ທີ່ມີຈຸດປະສົງຂໍການຮັບຮອງ ເພື່ອໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖືໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕ້ອງມີເງື່ອນໄຂຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 99. ນອກຈາກນັ້ນ ຍັງຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ເປັນບໍລິສັດຈັດລໍາດັບຄວາມໜ້າເຊື່ອຖືສາກົນ ຫຼື ເປັນບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ທີ່ນອນຢູ່ໃນບັນຊີລາຍຊື່ຂອງປະເທດທີ່ເປັນສະມາຊິກຂອງ ອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ຫຼື ຂອງປະເທດທີ່ມີສາຍພົວພັນຮ່ວມມື ໂດຍການເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັບ ອົງການຄຸ້ມຄອງວຽກງານຫຼັກຊັບຂອງ ສປປ ລາວ (ກໍລະນີ ເປັນບໍລິສັດຈັດລໍາດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ);

2. ມີລະບົບການຄຸ້ມຄອງບໍລິຫານພາຍໃນທີ່ຮັບປະກັນ;

3. ມີຜູ້ຮັບຜິດຊອບຈັດລໍາດັບຄວາມໜ້າເຊື່ອຖື ຢ່າງໜ້ອຍ 2 ຄົນ ທີ່ໄດ້ຮັບໃບຢັ້ງຢືນການຜ່ານຫຼັກສູດທາງດ້ານວິຊາຊີບການເງິນ ແລະ ການລົງທຶນລະດັບສາກົນ (Chartered Financial Analyst: CFA), ໃບຢັ້ງຢືນວິຊາຊີບຈັດລໍາດັບຄວາມໜ້າເຊື່ອຖື (Rating professional certificate) ແລະ/ຫຼື ໃບຮັບຮອງເປັນຜູ້ຮັບຜິດຊອບ

ຈັດລຳດັບຄວາມໜ້າເຊື່ອຖືຈາກ ອົງການຄຸ້ມຄອງວຽກງານຫຼັກຊັບຂອງຕ່າງປະເທດ ພ້ອມທັງມີປະສົບການຈັດລຳດັບຄວາມໜ້າເຊື່ອຖືໃນຂົງເຂດວຽກງານຫຼັກຊັບ ຢ່າງໜ້ອຍ 2 ປີ;

4. ມີຖານະການເງິນດີ ຫຼື ການເຄື່ອນໄຫວທຸລະກິດ ຕ້ອງມີກຳໄລ 1 ປີ ຄືນຫຼັງ ກ່ອນການຍື່ນເອກະສານປະກອບການຂໍຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

5. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 7 (ປັບປຸງ) ເອກະສານປະກອບການຂໍຮັບຮອງເປັນບໍລິສັດຈັດລຳດັບຄວາມໜ້າເຊື່ອຖື**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ທີ່ມີຈຸດປະສົງຂໍການຮັບຮອງ ເພື່ອໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕ້ອງປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 100. ນອກຈາກນັ້ນ ຍັງຕ້ອງມີເອກະສານເພີ່ມເຕີມ ດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ສຳເນົາໃບອະນຸຍາດສ້າງຕັ້ງ ຫຼື ໃບທະບຽນວິສາຫະກິດຂອງ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື;

3. ລາຍຊື່ ແລະ ຊີວະປະຫວັດຫຍໍ້ຂອງ ຜູ້ຮັບຜິດຊອບຈັດລຳດັບຄວາມໜ້າເຊື່ອຖື ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

4. ສຳເນົາໃບຢັ້ງຢືນການຜ່ານຫຼັກສູດທາງດ້ານວິຊາຊີບການເງິນ ແລະ ການລົງທຶນລະດັບສາກົນ (Chartered Financial Analyst: CFA), ໃບຢັ້ງຢືນວິຊາຊີບຈັດລຳດັບຄວາມໜ້າເຊື່ອຖື (Rating professional certificate) ແລະ/ຫຼື ໃບຮັບຮອງເປັນຜູ້ຮັບຜິດຊອບຈັດລຳດັບຄວາມໜ້າເຊື່ອຖືຈາກ ອົງການຄຸ້ມຄອງວຽກງານຫຼັກຊັບຂອງຕ່າງປະເທດຂອງ ຜູ້ຮັບຜິດຊອບຈັດລຳດັບຄວາມໜ້າເຊື່ອຖື;

5. ສຳເນົາກົດລະບຽບຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື;

6. ເອກະສານລາຍງານການເງິນ 1 ປີ ຄືນຫຼັງ ກ່ອນການຍື່ນເອກະສານປະກອບການຂໍຮັບຮອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

7. ແຜນການດຳເນີນທຸລະກິດປະຈຳປີຂອງ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື 3 ປີ ທຳອິດພາຍຫຼັງໄດ້ຮັບການຮັບຮອງ;

8. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 8 (ປັບປຸງ) ການພິຈາລະນາຮັບຮອງເປັນບໍລິສັດຈັດລຳດັບຄວາມໜ້າເຊື່ອຖື**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງພິຈາລະນາການຂໍຮັບຮອງເປັນ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ພາຍໃນເວລາ 30 ວັນ ນັບແຕ່ວັນໄດ້ຮັບເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ. ໃນກໍລະນີປະຕິເສດ ກໍໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາການຂໍຮັບຮອງເປັນ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາ ຊີ້ແຈງ ຫຼື ໃຫ້ຂໍ້ມູນ.

ພາຍຫຼັງໄດ້ຮັບໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບແລ້ວ ຕ້ອງປະກາດຕໍ່ມວນຊົນ ຜ່ານພາຫະນະສື່ມວນຊົນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບຮັບຮອງ ເປັນຕົ້ນໄປ.

## ໝວດທີ 3
## ຂອບເຂດການໃຫ້ບໍລິການ, ອາຍຸການຮັບຮອງ ແລະ ການຕໍ່ອາຍຸການຮັບຮອງ ຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື

**ມາດຕາ 9 (ປັບປຸງ) ຂອບເຂດການໃຫ້ບໍລິການຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ສາມາດເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 101.

**ມາດຕາ 10 ອາຍຸການຮັບຮອງຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື**

ໃບຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ມີອາຍຸການ 3 ປີ ນັບແຕ່ວັນທີ່ໄດ້ຮັບການຮັບຮອງ ເປັນຕົ້ນໄປ.

**ມາດຕາ 11 ການຕໍ່ອາຍຸການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ທີ່ຕ້ອງການຕໍ່ອາຍຸການຮັບຮອງ ເພື່ອສືບຕໍ່ໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 6 ແລະ ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາ ຢ່າງໜ້ອຍ 45 ວັນ ກ່ອນວັນໝົດອາຍຸການຮັບຮອງ.

## ໝວດທີ 4
## ສິດ, ໜ້າທີ່ ແລະ ການລາຍງານຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື

**ມາດຕາ 12 (ປັບປຸງ) ສິດ ແລະ ໜ້າທີ່ຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ທີ່ໄດ້ຮັບໃບຮັບຮອງໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 102. ນອກຈາກນັ້ນ ຍັງມີສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

1. ໃຫ້ການບໍລິການຕາມຂອບເຂດທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;
2. ເກັບຮັກສາຂໍ້ມູນ ແລະ ເອກະສານ ທີ່ເປັນຄວາມລັບຂອງລູກຄ້າ ໃນໄລຍະເວລາທີ່ຕົນໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ແລະ ພາຍຫຼັງສຳເລັດການໃຫ້ບໍລິການດັ່ງກ່າວ ເປັນເວລາ 10 ປີ ນັບແຕ່ວັນສິ້ນສຸດການໃຫ້ບໍລິການ ເປັນຕົ້ນໄປ;
3. ລາຍງານຜົນການຈັດລຳດັບຄວາມໜ້າເຊື່ອຖືທີ່ເປີດເຜີຍໃຫ້ແກ່ມວນຊົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພາຍໃນເວລາ 3 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ເປີດເຜີຍໃຫ້ແກ່ມວນຊົນ ເປັນຕົ້ນໄປ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຕາມທີ່ໄດ້ກຳນົດໃນສັນຍາ ກັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ;
5. ປະຕິບັດພັນທະຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງຄົບຖ້ວນ ແລະ ປະຕິບັດພັນທະອາກອນ ແລະ ພັນທະອື່ນ ທີ່

ກ່ຽວຂ້ອງກັບການໃຫ້ບໍລິການຂອງຕົນຕໍ່ ລັດຖະບານ ສປປ ລາວ ຕາມການກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;

6. ປະຕິບັດການລາຍງານ ແລະ/ຫຼື ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງກັບ ການບໍລິການຈັດລຳດັບຄວາມໜ້າເຊື່ອຖືໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 13 (ປັບປຸງ) ການລາຍງານການຈັດລຳດັບຄວາມໜ້າເຊື່ອຖື**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຕ້ອງລາຍງານການເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຜົນການຈັດລຳດັບຄວາມໜ້າເຊື່ອຖືທີ່ເປີດເຜີຍໃຫ້ແກ່ມວນຊົນ;

2. ສະພາບການເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ປະຈຳໄຕມາດ ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດແຕ່ລະໄຕມາດ ເປັນຕົ້ນໄປ;

3. ສະພາບການເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ປະຈຳປີ ພາຍໃນເວລາ 90 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ ເປັນຕົ້ນໄປ;

4. ການປ່ຽນແປງຜູ້ຮັບຜິດຊອບຈັດລຳດັບຄວາມໜ້າເຊື່ອຖື ເຊັ່ນ: ຊື່ ແລະ ນາມສະກຸນ ແລະ ຊີວະປະຫວັດຫຍໍ້ ພາຍໃນເວລາ 15 ວັນ ນັບແຕ່ວັນທີ່ມີການປ່ຽນແປງ ເປັນຕົ້ນໄປ;

5. ການປ່ຽນແປງ, ແກ້ໄຂ, ເພີ່ມສັນຍາລັກ ຫຼື ຄວາມໝາຍຂອງສັນຍາລັກ ທີ່ໃຊ້ເຂົ້າໃນການຈັດລຳດັບຄວາມໜ້າເຊື່ອຖື ພາຍໃນເວລາ 15 ວັນ ນັບແຕ່ວັນທີ່ມີການປ່ຽນແປງ ເປັນຕົ້ນໄປ.

ສຳລັບເນື້ອໃນການລາຍງານ ໃຫ້ປະຕິບັດຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ວາງອອກໃນແຕ່ລະໄລຍະ.

## ໝວດທີ 5
## ຄ່າບໍລິການ ແລະ ຂໍ້ຫ້າມ

**ມາດຕາ 14 (ປັບປຸງ) ຄ່າບໍລິການ**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ທີ່ມີຈຸດປະສົງໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ຕ້ອງເສຍຄ່າບໍລິການໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າຍື່ນສຳນວນຄຳຮ້ອງຂໍການຮັບຮອງ ເພື່ອໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ຈຳນວນ 5.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຍື່ນສຳນວນຄຳຮ້ອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ຄ່າອອກໃບຮັບຮອງການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ຈຳນວນ 15.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຮັບໃບຮັບຮອງ;

3. ຄ່າຕໍ່ໃບຮັບຮອງການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ຈຳນວນ 10.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຮັບໃບຮັບຮອງ;

4. ຄ່າຄຸ້ມຄອງປະຈຳປີ ຈຳນວນ 10.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນ ໄຕມາດ 1 ຂອງປີຖັດໄປ.

ກໍລະນີ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຫາກບໍ່ໄດ້ເຊັນສັນຍາໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືໃຫ້ແກ່ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ພາຍໃນປີນັ້ນ ແມ່ນຈະບໍ່ໄດ້ເສຍຄ່າຄຸ້ມຄອງປະຈຳປີ.

### ມາດຕາ 15 (ໃໝ່) ຂໍ້ຫ້າມ

ຂໍ້ຫ້າມສຳລັບ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 178. ນອກຈາກນັ້ນ ຍັງມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືໃນຂົງເຂດວຽກງານຫຼັກຊັບ ໂດຍບໍ່ໄດ້ຂໍການຮັບຮອງຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ບໍ່ເກັບຮັກສາຂໍ້ມູນ ແລະ ເອກະສານຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ພາຍຫຼັງສຳເລັດການໃຫ້ບໍລິການດັ່ງກ່າວ ເປັນເວລາ 10 ປີ;
3. ລາຍງານສະພາບການເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລ່າຊ້າກວ່າກຳນົດເວລາຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;
4. ບໍ່ລາຍງານ, ເຈດຕະນາລາຍງານບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ເຊື່ອງຊ້ອນຂໍ້ມູນ ກ່ຽວຂ້ອງກັບການເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
5. ມີພຶດຕິກຳອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ສຳລັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແມ່ນຫ້າມໃຊ້ບໍລິການຂອງ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ທີ່ບໍ່ໄດ້ຜ່ານການຮັບຮອງການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 16 (ໃໝ) ນະໂຍບາຍຕໍ່ຜູ້ມີຜົນງານ

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 17 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດ ໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະເບົາ ເປັນຕົ້ນ ຍື່ນເອກະສານຂໍຕໍ່ອາຍຸການຮັບຮອງການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ກ່ອນວັນທີ່ໃບຮັບຮອງ ຈະໝົດອາຍຸ ຕໍ່າກວ່າ 45 ວັນ, ບໍ່ໃຫ້ການຮ່ວມມືກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມ ຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີ ສາມາດຕົກລົງ ຫຼື ແກ້ໄຂ ຮ່ວມກັນໄດ້;

3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 15 ຂອງຕົ້ຕົກລົງສະບັບນີ້;

4. ກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ເປັນການລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດ ເປັນຄັ້ງທີ 2 ຈະຖືກປັບໃໝ ຈຳນວນ 2 ເທົ່າ ຂອງມູນຄ່າຄວາມເສຍຫາຍທີ່ເກີດຈາກການລະເມີດຂອງຕົນ;

2. ໃຫ້ການບໍລິການຈັດລຳດັບຄວາມໜ້າເຊື່ອຖືໃນຂົງເຂດວຽກງານຫຼັກຊັບ ໂດຍບໍ່ໄດ້ຂໍການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ 100.000.000 ກີບ;

3. ບໍ່ເກັບຮັກສາຂໍ້ມູນ ແລະ ເອກະສານຂອງ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ພາຍຫຼັງສຳເລັດການໃຫ້ບໍລິການດັ່ງກ່າວ ເປັນເວລາ 10 ປີ ຈະຖືກປັບໃໝ 50.000.000 ກີບ;

4. ລາຍງານສະພາບການດຳເນີນທຸລະກິດຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລ່າຊ້າກວ່າກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ 10.000.000 ກີບ ຕໍ່ຄັ້ງ;

5. ບໍ່ລາຍງານ, ເຈດຕະນາລາຍງານບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ເຊື່ອງຊ້ອນຂໍ້ມູນ ກ່ຽວກັບສະພາບການເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືຂອງຕົນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ 10.000.000 ກີບ ຕໍ່ຄັ້ງ.

ມາດຕະການເພີ່ມເຕີມຕໍ່ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະໃບຮັບຮອງການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື;

3. ຖອນໃບຮັບຮອງການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື;

4. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

ສຳລັບ ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ທີ່ໃຊ້ບໍລິການຂອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖື ຈາກຕ່າງປະເທດ ທີ່ບໍ່ໄດ້ຜ່ານການຮັບຮອງການໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖືຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ 100.000.000 ກີບ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື, ກຸ່ມເປົ້າໝາຍກ່ຽວກັບວຽກງານຫຼັກຊັບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການເຄື່ອນໄຫວໃຫ້ບໍລິການຈັດລຳດັບຄວາມໜ້າເຊື່ອຖື ກ່ຽວກັບວຽກງານຫຼັກຊັບຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 19 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນລະບຽບວ່າດ້ວຍການຮັບຮອງບໍລິສັດຈັດລຳດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ ສະບັບເລກທີ 002/ຄຄຊ, ລົງວັນທີ 8 ທັນວາ 2015.

ປະທານຄະນະກຳມະການຄຸ້ມຄອງຫຼັກຊັບ

ສອນໄຊ ສິດພະໄຊ